VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ເລກທີ: 016 /ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ: 06 APR 2023

ຮຽນ: ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເລື່ອງ: ແຈ້ງມະຕິກອງປະຊຸມວິສາມັນ ສະພາບໍລິຫານຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ຄັ້ງທີ 2 ປະຈຳ ປີ 2023.

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບ ເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (ວຈຊຕ) ຂໍຖືເປັນກຽດແຈ້ງມະຕິຂອງກອງປະຊຸມວິສາມັນ ສະພາບໍລິຫານ ຄັ້ງທີ 2 ປະຈຳປີ 2023 ໃນ ວັນທີ 5 ເມສາ 2023, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

ມະຕິ 1: ເຫັນດີການລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນຂອງ ວຈຊຕ ປະຈຳປີ 2021, ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປ ພິຈາລະນາ ແລະ ຮັບຮອງ.

ມະຕິ 2: ເຫັນດີບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນຂອງ ວຈຊຕ ປະຈຳປີ 2021, ເພື່ອສະເໜີຕໍ່ກອງປະຊຸມຜູ້ ຖືຮຸ້ນຄັ້ງຖັດໄປ ພິຈາລະນາ ແລະ ຮັບຮອງ.

ມະຕິ 3: ເຫັນດີບົດລາຍງານການເງິນຂອງ ວຈຊຕ ປະຈຳປີ 2022, ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປ ພິຈາລະນາ ແລະ ຮັບຮອງ.

ມະຕິ 4: ເຫັນດີບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2022 ແລະ ແຜນການດຳເນີນທຸລະກິດ 2023 ຂອງ ວຈຊຕ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປ ພິຈາລະນາ ແລະ ຮັບຮອງ.

ມະຕິ 5: ເຫັນດີແຜນການຈ່າຍເງິນປັນຜົນປະຈຳປີ 2022 ຂອງບໍລິສັດ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປພິຈາລະນາ ແລະ ຮັບຮອງ ເຊິ່ງມີລາຍລະອຽດຄືດັ່ງລຸ່ມນີ້:

1. ແບ່ງເຂົ້າຄັງສະສົມຕາມລະບຽບການ: 10%;
2. ຈ່າຍເງິນປັນຜົນ: 5 ກີບ/ຮຸ້ນ;
3. ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;
4. ກຳນົດເອົາ 25/04/2023 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການຮັບເງິນປັນຜົນ, ມື້ຈ່າຍເງິນປັນຜົນແມ່ນ 23/05/2023;
5. ມອບໃຫ້ຜູ້ອຳນວຍການໃຫຍ່ ເປັນຜູ້ລົງນາມເອກະສານຕ່າງໆທີ່ກ່ຽວກັບການຈ່າຍເງິນປັນຜົນ.

ມະຕິ 6: ເຫັນດີການລາຍງານການວ່າຈ້າງບໍລິສັດກວດສອບບັນຊີອິດສະຫຼະ ຂອງບໍລິສັດ ວຈຊຕ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປ ພິຈາລະນາ ແລະ ຮັບຮອງ.

ມະຕິ 7: ເຫັນດີລາຍການທີ່ກ່ຽວພັນ ເຊິ່ງ ບໍລິສັດ ວຈຊຕ ຈະຮັບຊື້ຊັບສິນໃນຕຶກສຳນັກງານ ຂອງ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປ ພິຈາລະນາ ແລະ ຮັບຮອງ.

ມະຕິ 8: ເຫັນດີການປັບປ່ຽນສະມາຊິກສະພາບໍລິຫານສະໄໝທີ 3 ຂອງ ວຈຊຕ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປ ພິຈາລະນາ ແລະ ຮັບຮອງ.

ມະຕິ 9: ເຫັນດີການດັດແກ້ກົດລະບຽບ ຂອງ ບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປ ພິຈາລະນາ ແລະ ຮັບຮອງ.

ມະຕິ 10: ເຫັນດີວາລະທີ່ຈະສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ພິຈາລະນາ ແລະ ຮັບຮອງ ຄືດັ່ງລຸ່ມນີ້:

ວາລະທີ 1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021;

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021;

ວາລະທີ 3: ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນຂອງ ວຈຊຕ ປະຈຳປີ 2022;

ວາລະທີ 4: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2022 ແລະ ແຜນການດຳເນີນທຸລະກິດ 2023 ຂອງ ວຈຊຕ;

VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ວາລະທີ 5: ພິຈາລະນາ ແລະ ຮັບຮອງແຜນການຈ່າຍເງິນປັນຜົນປະຈຳປີ 2022 ຂອງບໍລິສັດ;

ວາລະທີ 6: ຮັບຟັງການລາຍງານການວ່າຈ້າງບໍລິສັດກວດສອບບັນຊີອິດສະຫຼະ ຂອງບໍລິສັດ ວຈຊຕ;

ວາລະທີ 7: ພິຈາລະນາ ແລະ ຮັບຮອງລາຍການທີ່ກ່ຽວພັນ ເຊິ່ງ ບໍລິສັດ ວຈຊຕ ຈະຮັບຊື້ຊັບສິນໃນຕຶກສຳນັກງານ ຂອງ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ;

ວາລະທີ 8: ພິຈາລະນາ ແລະ ຮັບຮອງການປັບປ່ຽນສະມາຊິກສະພາບໍລິຫານສະໄໝທີ 3;

ວາລະທີ 9: ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບ ຂອງ ບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ;

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ປະທານສະພາບໍລິຫານ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company

He Jun